ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ເລກທີ 257 /ຫຄຊກລ
ນະຄອນຫລວງວຽງຈັນ, ວັນທີ 23 ມີນາ 2023

# ໜັງສືລາຍງານ

**ຮຽນ:** ທ່ານ ຫົວໜ້າຫ້ອງການ ຄະນະກາມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ ທີ່ນັບຖື.

**ເລື່ອງ:** ຜົນສຳເລັດກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈາໄຕ ມາດ 01, ປີ 2023 ຜົນການເກັບກຳຂໍ້ມູນ ສຳຫຼວດຄວາມຮັບຮູ້, ພຶດຕິກຳ ແລະ ທັດສະນະຄະຕິ ຄວາມອັນຕະລາຍ ຂອງ ລບຕ (KAP Survey) ແລະ ແຜນການເຄື່ອນໄຫວວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ໄຕມາດ 02, 2023.

- ອີງຕາມ ຂໍ້ຕົກລົງ ລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 4999/ຮສສ ,ລົງວັນທີ 09 ກັນຍາ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ.
- ອີງຕາມ ແຜນການເຄື່ອນໄຫວ ປະຈຳໄຕມາດ 01,2023 ຂອງໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຫ້ອງການ ຄຊກລ.

ໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງຜົນຮ້າຍຂອງ ລບຕ ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂລະເບີດບໍ່ທັນແຕກ ທີ່ ຕົກຄ້າງ ຢູ່ ສປປ ລາວ ຂໍຖືເປັນກຽດລາຍງານມາຍັງທ່ານເພື່ອຊາບກ່ຽວກັບຜົນສຳເລັດກອງປະຊຸມກຸ່ມວິຊາການໂຄສະນາຜົນຮ້າຍຂອງ ລບຕ, ຜົນການເກັບກຳຂໍ້ມູນ ສຳຫຼວດຄວາມຮັບຮູ້, ພຶດຕິກຳ ແລະ ທັດສະນະຄະຕິ ຄວາມອັນຕະລາຍ ຂອງ ລບຕ (KAP Survey) ແລະ ແຜນການເຄື່ອນໄຫວວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ໄຕມາດ 02, 2023. ກອງປະຊຸມດັ່ງກ່າວໄດ້ຈັດຂຶ້ນໃນຕອນບ່າຍໂມງ ຂອງວັນທີ 20 ມີນາ 2023, ທີ່ຕຶກປະກັນສັງຄົມແຫ່ງຊາດ ໂດຍການເປັນປະທານຂອງ ທ່ານ ບຸນເພັງ ສີສະຫວັດ ຮອງຫົວໜ້າຫ້ອງການ ຄຊກລ ລາຍລະອຽດມີດັ່ງລຸ່ມນີ້:

1. **ຈຸດປະສົງ.**
   - ລາຍງານຜົນການເກັບກຳຂໍ້ມູນ ສຳຫຼວດຄວາມຮັບຮູ້, ພຶດຕິກຳ ແລະ ທັດສະນະຄະຕິ ຄວາມອັນຕະລາຍ ຂອງ ລບຕ (KAP Survey);
   - ລາຍງານການຈັດຕັ້ງປະຕິບັດ ວຽກງານ ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໄຕມາດ 01, 2023 ແລະ ແຜນວຽກຈຸດສຸມ ໄຕມາດ 02 ປີ 2023;

- ອັດເດດສະຖິຕິການເກີດອຸປະຕິເຫດ ຈາກ ລບຕ ໄຕມາດ ໄຕມາດ 01 ປີ 2023.
- ປຶກສາຫາລື ແລະ ແລກປ່ຽນບົດຮຽນປະສົບການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໂຄສະນາຜົນຮ້າຍ ແລະ ຜົນການເກັບກຳຂໍ້ມູນ ສຳຫຼວດຄວາມຮັບຮູ້, ພຶດຕິກຳ ແລະ ທັດສະນະຄະຕິ ຄວາມອັນຕະລາຍ ຂອງ ລບຕ (KAP Survey).

2. **ຜູ້ເຂົ້າຮ່ວມກອງປະຊຸມ**

ກົມກິລາມວນຊົນ,ພາລະ ແລະ ສິນລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ, ກົມສາມັນສຶກສາ ກະຊວງສຶກສາທິການ ແລະ ກິລາ, ກົມສື່ມວນຊົນ ກະຊວງຖະແຫຼງຂ່າວ ວັດທະນາທຳ ແລະ ການທ່ອງທ່ຽວ, ກົມຂະບວນການ ສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ, ກົມອົງການຈັດຕັ້ງສາກົນ ກະຊວງການຕ່າງປະເທດ, ສູນການຮຽນຮ່ວມ ກະຊວງສຶກສາທິການ ແລະ ກິລາ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ ກະຊວງສາທາລະນະສຸກ, ສູນຝຶກອົບຮົມສະຫະພັນແມ່ຍິງລາວ, ສູນການແພດຟື້ນຟູໜ້າທີ່ການ, ກົມແຜນການ ແລະ ການຮ່ວມມືສາກົນ ກະຊວງ ແຮງງານ ແລະສະຫັວດດີການສັງຄົມ, ກົມນະໂຍບາຍຕໍ່ຜູ້ມີຜົນງານ, ພິການ ແລະ ອາຍຸສູງ ກະຊວງ ແຮງງານ ແລະສະຫັວດດີການສັງຄົມ, ກົມການຈັດຫາງານ ກະຊວງ ແຮງງານ ແລະສະຫັວດດີການສັງຄົມ, ສູນຝຶກອົບຮົມຄົນພິການ ສີເກີດ, ສະຖາບັນພັດທະນາສີມືແຮງງານ ກະຊວງ ແຮງງານ ແລະສະຫັວດດີການສັງຄົມ, ສະມາຄົມຄົນພິການແຫ່ງຊາດ, ສູນພັດທະນາສີມືແຮງງານ ພະແນກ ແຮງງານ ແລະ ສະຫັວດດີການສັງຄົມ ນະຄອນຫຼວງວຽງຈັນ, ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຫ້ອງການ ຄຊກລ, ກອງກວດກູ້ລະເບີດເພື່ອມະນຸດສະທຳ 58, ກົມພັດທະນາວິຊາຊີບ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ວິທະຍຸກະຈາຍສຽງແຫ່ງງຊາດ, ຊ່ຽວຊານ ຈາກ ສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ ລາວ, ໂຄງການເກັບກູ້ລະເບີດແຫ່ງຊາດ, ອົງການເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ (HI), ອົງການ ຣາໂລຫັດອົງການເທີຣາ ຣິໄນຊັນ ປະຈຳແຂວງຊຽງຂວາງ, ອົງການແມັກ (MAG), ອົງການສຶກສາໂລກ ປະຈາ ສປປ ລາວ (WEL), ບໍລິສັດລ້ານຊ້າງມີນີໂຣນ (ຊີເພີງ), ອົງການ ໂຄບ ແລະ ບໍລິສັດທີ່ປຶກສາ ຂອງ ສປຊ ທີ່ເຮັດການສຳຫຼວດ (KAP Survey).

3. **ການດຳເນີນກອງປະຊຸມ**

ກອງປະຊຸມຮັບຟັງການນຳສະເໜີ ຈາກ ດຣ. ໂຣເບີດ ບ້ອບຄີລີ ກ່ຽວກັບ ຜົນການເກັບກຳຂໍ້ມູນ ສຳຫຼວດຄວາມຮັບຮູ້, ພຶດຕິກຳ ແລະ ທັດສະນະຄະຕິ ຄວາມອັນຕະລາຍ ຂອງ ລບຕ (KAP Survey). ຢູ່ ເມືອງແປກ, ເມືອງຄຳ ແລະ ເມືອງຄູນ ແຂວງຊຽງຂວາງ ຜ່ານການເກັບກຳຂໍ້ມູນ ສຳຫຼວດ ສ່ວນໃຫ່ຍອຸປະຕິເຫດຈະເກີດຂຶ້ນກັບເພດຊາຍ ໄວກາງຄົນ ແລະ ເດັກນ້ອຍອາຍຸ ຕ່ຳກວ່າ 7 ປີ ລົງມາ ເກືອບວ່າ 60 ເປີເຊັນ, ແລະ ເພດຍິງ ແມ່ນ 40 ເປີເຊັນ ໃນການການຖືກເຄາະຮ້າຍ ຈາກ ລບຕ ນອກຈາກນັ້ນ, ຜົນການສຳຫຼວດ ຂອງ (KAP Survey). ທ່ານໄດ້ແບ່ງ ອອກເປັນ 5 ກຸ່ມດັ່ງນີ້:

1) The unaware ບຸກຄົນບໍ່ຮູ້ເຖິງຄວາມອັນຕະລາຍຂອງລະເບີດບໍ່ທັນແຕກ ຢູ່ໃນກຸ່ມນີ້ແມ່ນຈະເປັນນ້ອຍຫຼາຍກວ່າ;
2) The uninformed ບຸກຄົນຮູ້ກ່ຽວກັບລະເບີດບໍ່ທັນແຕກ ແຕ່ບໍ່ຮູ້ພຶດຕິກຳທີ່ໄພປອດ ລວມເຖີງພະນັກງານທີ່ເຮັດວຽກນຳ ເອັນຈີໂອ;

3) The Reckless ບຸກຄົນຮູ້ກ່ຽວກັບລະເບີດບໍ່ທັນແຕກ, ພຶດຕິກຳທີ່ສ່ຽງ ແຕ່ບໍ່ສົນໃຈມັນ ກຸ່ມນີ້ລວມເຖິງໄວໜຸ່ມ ແລະ ເດັກນ້ອຍທີ່ຫຼິ້ນ ລບຕ ໂດຍບໍ່ຢ້ານ;
4) The Intentional ບຸກຄົນແຕ່ບໍ່ມີທາງເລືອກ ແຕ່ຕັ້ງໃຈປະຕິບັດພຶດຕິກຳທີ່ບໍ່ປອດໄພ ລວມໄປເຖິງຊາວໜຸ່ມ ຫຼື ຜູ້ໃຫ່ຍ ຜູ້ທີ່ເຮັດນາ, ເຮັດໄຮ່, ຮົ້ວສອນໃນພື້ນທີ່ອັນຕະລາຍ;
5) The misinformed ບຸກຄົນທີ່ເຂົ້າບໍ່ເຖິງຂໍ້ມູນຂ່າວສານ ລບຕ, ກ່ຽວກັບຄວາມປອດໄພ, ຫຼື ຄວາມເຊື່ອ, ຄວາມຮູ້ເທົ່າບໍ່ເຖິງການ.

ຈາກນັ້ນ, ຫົວໜ້າໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໄດ້ລາຍງານຕໍ່ກອງປະຊຸມໄດ້ຮັບຊາບກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ປະຈຳໄຕມາດ 1 ປີ 2023 ແລະ ແຜນວຽກຈຸດສຸມທີ່ຕ້ອງສືບຕໍ່ໃນ ໄຕມາດ 02, 2023 ເປັນຕົ້ນແມ່ນ: ຈັດກອງປະຊຸມປະຊຸມປະຈຳປີ ກ່ຽວກັບການໂຄສະນາຜ່ານທາງລາຍການວິທະຍຸ, ຈັດປະຊຸມຮ່ວມກັບກະຊວງສຶກສາ ທິການ ແລະ ກິລາ ໃນການປະສານງານການເຊື່ອມຈອດຂໍ້ມູນ, ຈັດຝຶກອົບຮົມເພື່ອສ້າງຄວາມເຂັ້ມແຂງໃຫ້ກັບຊາວໜຸ່ມອາສາສະໝັກຂັ້ນບ້ານ ຮ່ວມກັບສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ຈັດຝຶກອົບຮົມໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໃຫ້ກັບກອງກອດກູ້ເພື່ອມະນຸດສະທຳ 58, ຈັດກອງປະຊຸມທົບທວນສື່ໂຄສະນາຮ່ວມກັບກະຊວງ ຖະແຫຼງຂ່າວວັດທະນະທຳ ລະການທ່ອງທ່ຽວ. ຕໍ່ຈາກນັ້ນກອງປະຊຸມກໍ່ໄດ້ຮັບຟັງລາຍງານ ການເກີດອຸປະຕິເຫດ ຈາກໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈາກ ລບຕ ໃນໄຕມາດ 01 ປີ 2023, ມີອຸປະຕິເຫດເກີດຂຶ້ນ 05 ຄັ້ງ ຜູ້ໄດ້ຮັບເຄາະຮ້າຍ ທັງໝົດ 12 ຄົນ ( ຍິງ 04 ຄົນ, ຊາຍ 8 ຄົນ ) ບາດເຈັບ 11 ຄົນ ແລະ ເສຍຊີວິດ 01 ຄົນ, ຜູ້ໃຫ່ຍທັງໝົດ 04 ຄົນ (ຍິງ 02 ຄົນ, ຊາຍ 02 ຄົນ) ບາດເຈັບ 03 ຄົນ ແລະ ເສຍຊີວິດ 01 ຄົນ, ເດັກນ້ອຍທັງໝົດ 08 ຄົນ, (ຍິງ 03 ຄົນ, ຊາຍ 05 ຄົນ) ບາດເຈັບ 05 ຄົນ ແລະ ເສຍຊີວິດ 00 ຄົນ. ສາເຫດແມ່ນຍ້ອນການດັງໄຟຈຸດໄຮ່ ຂຸດດິນປູກມັນຕົ້ນ.

**4. ຜົນສຳເລັດຂອງກອງປະຊຸມ:**

- ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຮູ້ກ່ຽວກັບຜົນການເກັບກຳຂໍ້ມູນ ສຳຫຼວດຄວາມຮັບຮູ້, ພຶດຕິກຳ ແລະ ທັດສະນະຄະຕິ ຄວາມອັນຕະລາຍ ຂອງ ລບຕ (KAP Survey);
- ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຮູ້ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປີ ໄຕມາດ 01 ແລະ ທິດທາງແຜນການວຽກຈຸດສຸມ ໄຕມາດ 2, 2023;
- ໄດ້ຮັບຮູ້ຂໍ້ມູນຈຳນວນສະຖິຕິການເກີດອຸປະຕິເຫດ ແລະ ສາເຫດທີ່ພາໃຫ້ເກີດອຸປະຕິເຫດ ຈາກ ລບຕ;
- ກອງປະຊຸມຍັງໄດ້ ຄົ້ນຄວ້າ ແລະ ປຶກສາຫາລື ກ່ຽວກັບທົບທວນສື່ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ເພື່ອໃຫ້ແທດເໝາະກັບສະພາບຕົວຈິງ ໂດຍສະເພາະເດັກນ້ອຍທີ່ບໍ່ທັນຢູ່ໃນໄວຮຽນ;
- ທ່ານ ນາງ ວັນເພັງ ຂຸນບົວໄລ ຮອງຫົວໜ້າກົມພັດທະນາວິຊາຊີບ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ດີໃຈທີ່ທາງຫ້ອງການ ຄຊກລ ໄດ້ຮ່ວມມືກັບ ທາງ ສປຊ ໃນການເຮັດສຳຫຼວດຄວາມຮັບຮູ້, ພຶດຕິກຳ ແລະ ທັດສະນະຄະຕິ ຄວາມອັນຕະລາຍ ຂອງ ລບຕ (KAP Survey) ເປັນເກັບກຳຂໍ້ມູນ ເພື່ອຈະໝູນເຂົ້າໃນການໂຄສະນາຜົນຮ້າຍຂອງ ລບຕ ໄລຍະຜ່ານມາ ຂໍຊົມເຊີຍທາງ ຫ້ອງ ຄຊກລ ສູ້ຊົນພະຍາມແກ້ໄຂ ລບຕ ໃນຫຼາຍຮູບແບບ ວິທີທາງການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ແມ່ນເປັນຮູບແບບການໂຄສະນາທີ່ດີ ເປັນຕົ້ນໂຄສະນາຕາມໂຮງຮຽນ, ວິທະຍຸ, ໂທລະໂຄ່ງຕາມບ້ານ ແລະ ສື່ອອນລາຍ ທີ່ ມັກໃຊ້ ແລະ ມັກຟັງ ເພາະຈະເຮັດໃຫ້ອຸປະຕິເຫດຫຼຸດລົງ;

- ທ່ານ ສັງຄານ ຈຸມຄຳພັນ ຮອງຜູ້ອຳນວຍການວິທະຍຸກະຈາຍສຽງແຫ່ງຊາດລາວ ການດຳເນີນໂຄງການ ສຳຫຼວດຄວາມຮັບຮູ້, ພຶດຕິກຳ ແລະ ທັດສະນະຄະຕິ ຄວາມອັນຕະລາຍ ຂອງ ລບຕ (KAP Survey) ເປັນໂຄງການທີ່ດີ ຂໍໃຫ້ມີການຂະຫຼາຍໄປຫຼາຍແຂວງ ບໍ່ສະເພາະແຕ່ແຂວງຊຽງຂວາງ ແລະ ມີ
- ບາງແຂວງກໍ່ມີ ຜູ້ໄດ້ຮັບບາດເຈັບ ແລະ ຖືກເຄາະຮ້າຍ ຈາກ ລບຕ ຈຳນວນຫຼາຍ, ເພື່ອຍົກຄວາມຮັບຮູ້ ຂອງກຸ່ມຄົນທີ່ມີຄວາມສ່ຽງ ຈາກ ລບຕ ໃຫ້ເຂົ້າເຖິງຂໍ້ມູນ ຂ່າວສານແຫຼ່ງໃດໜຶ່ງ ເພາະວ່າໃຊ້ສື່ອັນໃດອັນໜຶ່ງບໍ່ໄດ້ ຕ້ອງໃຊ້ຫຼາຍສື່ເພື່ອໂຄສະນາໃຫ້ເຂົ້າກຸ່ມຄົນ ແລະ ເນື້ອໃນສື່ໂຄສະນາ ແມ່ນໃຫ້ແທດເໝາະກັບກຸ່ມຄົນ ໂດຍສະເພາະແມ່ນຊົນເຜົ່າ;
- ກອງປະຊຸມໄດ້ປຶກສາຫາລື ກ່ຽວກັບການໂຄສະນາ ສຶກສາຄວາມສ່ຽງໄພ ຈາກ ລບຕ ທາງໂທລະໂຄ່ງເຫັນວ່າໄດ້ຮັບຜົນ ສະແດງອອກໃນການເກີດອຸປະຕິເຫດຫຼຸດລົງ.

**5. ກອງປະຊຸມຕົກລົງດັ່ງນີ້:**

- ໄດ້ເຫັນດີ ທົບທວນຄືນກ່ຽວກັບຫຼັກສູດໂຄສະນາສຶກສາຄວາມສ່ຽງ ຈາກ ລບຕ ໂດຍການສົມທົບກັບກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ການທ່ອງທ່ຽວ;
- ໄດ້ເຫັນດີ ພັດທະນາຫຼັກສູດການຝຶກອົບຮົມວຽກງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໃຫ້ບັນດາອົງການປະຕິບັດງານ, ບັນດາກະຊວງ ແລະ ພາກສ່ວນອື່ນທີ່ມີຄວາມສົນໃຈ;
- ໄດ້ເຫັນດີກ່ຽວກັບການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ທາງວິທະຍຸ ເປັນພາສາຊົນເຜົ່າ ເພື່ອເຮັດກຸ່ມເປົ້າໝາຍໄດ້ເຂົ້າເຖິງສື່, ຂໍ້ມູນຂ່າວສານ ກ່ຽວກັບ ລະເບີດບໍ່ທັນແຕກ;
- ໄດ້ເຫັນດີກ່ຽວກັບການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງບັນຫາລະເບີດບໍ່ທັນແຕກ ຂັ້ນສູນກາງ ແລະ ຂັ້ນແຂວງໃນການ ຕິດຕາມຊຸກຍູ້ ແລະ ປະເມີນການຈັດຕັ້ງປະຕິດບັດກິດຈະກຳ ຂອງບັນດາອົງການປະຕິບັດງານ;
- ໄດ້ເຫັນດີໃນການສົ່ງເສີມອາສາສະໝັກຂັ້ນບ້ານໃຫ້ຫຼາຍຂຶ້ນເພື່ອເຮັດໃຫ້ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ມີຄວາມຍືນຍົງ ແລະ ເປັນຂົວຕໍ່ເຂົ້າໃນໂຄສະນາ ເພື່ອປູກຈິດສຳນຶກ ໃຫ້ເດັກນ້ອຍທີ່ເກີດໃໝ່ ຮັບຮູ້ເຖິງຜົນຮ້າຍຂອງ ລບຕ;
- ນຳຜົນສຳຫຼວດຄວາມຮັບຮູ້, ພຶດຕິກຳ ແລະ ທັດສະນະຄະຕິ ຄວາມອັນຕະລາຍ ຂອງ ລບຕ (KAP Survey) ພວກເຮົາອາດຈະຄົ້ນຄວ່າຂໍ້ມູນຕື່ມເພື່ອນຳໄປເຂົ້າກອງປະຊຸມກຸ່ມວິຊາການໃນຄັ້ງຕໍ່ໄປ;
- ສືບຕໍ່ປຶກສາຫາລື ລົງເລິກ ກ່ຽວກັບບັນດາກິດຈະກຳໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ໃນການແລກປ່ຽນຂໍ້ມູນຮ່ວມກັນເພື່ອມາຈັດຕັ້ງປະຕິບັດ.
- ໄດ້ເຫັນດີໃຫ້ ບໍລິສັດ ລ້ານຊ້າງ ມິນີໂຣນ (ຊິເຜີງ) ທີ່ມີເງື່ອນໄຂ ຊ່ວຍສະໜອງວັດຖຸອຸປະກອນ ເຂົ້າໃນວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ;
- ກອງປະຊຸມໄດ້ເຫັນດີໃຫ້ເພີ່ມທະວີການພົວພັນປະສານຫຼາຍຂຶ້ນ.

**6. ຂໍ້ສະເໜີ**

- ຜົນສຳຫຼວດຄວາມຮັບຮູ້, ພຶດຕິກຳ ແລະ ທັດສະນະຄະຕິ ຄວາມອັນຕະລາຍ ຂອງ ລບຕ (KAP Survey) ສະເໜີກ່ຽວກັບການອອກແບບ ໂປດສະເຕີໃຫ້ເຂົ້າໃຈງ່າຍຂຶ້ນເພື່ອເປັນເຄື່ອງມືຊ່ວຍເຂົ້າໃນການ ໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ;

- ໄດ້ສະເໜີໃຫ້ມີການທົບທວນຫຼັກສູດ ແລະ ເນື້ອໃນ ການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ເພື່ອ ໃຫ້ແທດເໝາະກັບສະພາບຕົວຈິງ;
- ກອງປະຊຸມໄດ້ສະເໜີໃຫ້ຫ້ອງການ ຄຊກລ ຊ່ວຍສະໜອງງົບປະມານ ເພື່ອນນຳໄປຜະລິດສະປອດ ໂຄສະນາ ສຶກສາຄວາມສ່ຽງໄພຈາກ ລບຕ ເປັນພາສາຊົນເຜົ່າ ເປັນຕົ້ນແມ່ນ ເຜົ່າມົ້ງ, ຂະມຸ ແລະ ເຜົ່າບຣຸ ເພາະເຫັນອຸປະຕິເຫດສ່ວນຫຼາຍແມ່ນເກີດຂຶ້ນກັບຊົນເຜົ່າ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຊາບ ແລະ ໃຫ້ທິດຊີ້ນຳຕາມເຫັນສົມຄວນດ້ວຍ.

| ປະທານກອງປະຊຸມ | ຜູ້ລາຍງານ |
|---|---|
| ຫ້ອງການ ຄຊກລ | |
| **ບຸນເພັງ ສີສະຫວັດ** | |